**Australian Government**

**Inspector-General of Taxation**

**Taxation Ombudsman**

# ຢາກຮ້ອງຮຽນກ່ຽວກັບເລື່ອງພາສີ?

**Lao**

# ພວກເຮົາແມ່ນໃຜ

ຜູ້ກວດກາ-ທົ່ວໄປ & ຜູ້ກວດກາດ້ານພາສີ (The Inspector-General & Taxation Ombudsman [IGTO]) ແມ່ນໜ່ວຍງານເອກະລາດຂອງຣັຖບານກາງ ທີ່ຮັບຜິດຊອບ ຊ່ວຍທ່ານໃນເຣື່ອງຮ້ອງຮຽນກ່ຽວກັບຄວາມປະພຶດໃນໜ້າທີ່ການງານຂອງ ຫ້ອງການພາສີ ແຫ່ງອອສເຕຣເລັຍ (Australian Taxation Office [ATO]) ແລະຄະນະອຳນວຍການກຸ່ມວິຊາຊີບດ້ານພາສີ (Tax Practitioners Board [TPB]).



1300 44 88 29 (ໂທ ຣາຄາທ້ອງຖິ່ນ)

# ເຮົາຈະຊ່ວຍທ່ານໄດ້ຢ່າງໃດ

ເຮົາໃຫ້ບໍລິການຊ່ຽວຊານດ້ານພາສີ ທີ່ເປັນເອກະລາດ, ແລະຟຣີ ເພື່ອຊ່ວຍທ່ານສະເໜີເຣື່ອງຮ້ອງຮຽນ.

'ຄວາມປະພຶດໃນໜ້າທີ່ການງານ' ແມ່ນກວມເອົາຄວາມໝາຍກວ້າງໆເຊິ່ງປົກກະຕິ ຈະກໍາລວມເອົາເຣື່ອງຄວາມຍຸຕິທັມ ແລະ ຄວາມສົມເຫດສົມຜົນ ເມື່ອ ATO ຫຼື TPB ປະຕິບັດໜ້າທີ່ຫຼືພົວພັນວຽກງານ ກັບທ່ານ.

ຕົວຢ່າງການຊ່ວຍເຫຼືອທີ່ IGTO ສາມາດໃຫ້ທ່ານໄດ້, ລວມສິ່ງຕ່າງໆ, ແຕ່ບໍ່ຈໍາກັດແຕ່ພຽງເທົ່ານີ້, ເຊັ່ນ:

- ລະຍະເວລາໃນການຕອບຕໍ່ການສອບຖາມຂອງທ່ານ;
- ກິຣິຍາຄວາມປະພຶດທີ່ເຈົ້າໜ້າທີ່ ATO ຫຼື TPB ສະແດງຕໍ່ທ່ານ;
- ການສະໜອງໃຫ້ມີບໍລິການທາງອອນລາຍ;
- ການຮັບປະກັນຫຼືໃຫ້ຄໍາອະທິບາຍຢ່າງພຽງພໍຕໍ່ຄວາມປະພຶດຕ່າງໆຂອງ ATO ຫຼື TPB;

www.igt.gov.au

- ຮັບປະກັນວ່າຄວາມປະພຶດຂອງ ATO ຫຼື TPB ແມ່ນສອດຄ່ອງກັບນະໂຍບາຍແລະຂັ້ນຕອນທີ່ວາງໄວ້; ແລະ
- ຮັບປະກັນວ່າ ATO ຫຼື TPB ປະພຶດຕໍ່ທ່ານຢ່າງຍຸຕິທັມແລະໂປ່ງໃສແລະພິຈາຣະນາທຸກຂໍ້ມູນທີ່ກ່ຽວຂ້ອງເຊິ່ງທ່ານສນອງໃຫ້, ລວມທັງການກວດກາແລະ ສອບສວນ.

ຖ້າທ່ານບໍ່ໝັ້ນໃຈວ່າພວກເຮົາຈະຊ່ວຍທ່ານໄດ້ຫຼືບໍ່, ກໍຂໍໃຫ້ທ່ານຕິດຕໍ່ສອບຖາມກັບພວກເຮົາໄດ້.

ຖ້າເຮົາບໍ່ສາມາດຊ່ວຍທ່ານໄດ້ໂດຍກົງ, ເຮົາກໍຈະພະຍາຍາມສຸດຄວາມສາມາດໃນການໃຫ້ຄຳແນະນຳໄປຫາໜ່ວຍງານຫຼືທາງການທີ່ເໝາະສົມທີ່ສຸດໃຫ້ຊ່ວຍທ່ານ.

GPO Box 551, Sydney NSW 2001

# ຂັ້ນຕອນການຮ້ອງຮຽນ

ເພື່ອຍື່ນຄໍາຮ້ອງຮຽນມາຫາຫ້ອງການຂອງພວກເຮົາ, ຂໍໃຫ້ເບິ່ງພາກທີ່ຂຽນໄວ້ວ່າ "ຈະຕິດຕໍ່ພວກເຮົາຢ່າງໃດ" (How to contact us).

ຫຼັງຈາກທີ່ທ່ານຍື່ນຄໍາຮ້ອງເຂົ້າໄປແລ້ວ, ເຈົ້າໜ້າທີ່ສອບສວນຂອງ IGTO ຈະຕິດຕໍ່ມາຫາທ່ານພາຍໃນສອງມື້ທີ່ທາງການເຮັດວຽກ ເພື່ອແຈ້ງໃຫ້ຊາບວ່າໄດ້ຮັບຄໍາຮ້ອງແລ້ວແລະປຶກສາເຣື່ອງຮ້ອງຮຽນຂອງທ່ານ.

ເຮົາຈະຊ່ວຍທ່ານໂດຍກົງເພື່ອແກ້ໄຂເຣື່ອງຮ້ອງຮຽນຂອງທ່ານ ຖ້າເປັນໄປໄດ້.

ເຮົາອາດຈະຂໍເອົາຂໍ້ມູນເພີ່ມເຕີມຈາກທ່ານ, ຈາກ ATO ຫຼື TPB ເພື່ອໃຫ້ເຂົ້າໃຈບັນຫາໃນການຮ້ອງຮຽນຂອງທ່ານໃຫ້ໄດ້ດີຂຶ້ນແລະເພື່ອຕັດສິນວ່າເຮົາຈະຊ່ວຍທ່ານໃຫ້ໄດ້ດີທີ່ສຸດແບບໃດ.

ເຮົາຈະແຈ້ງໃຫ້ທ່ານຊາບກ່ຽວກັບຄວາມຄືບໜ້າ ແລະຈະຕັ້ງຂອບເຂດເວລາຂອງການສອບສວນຂອງເຮົາໃນຊ່ວງທີ່ດໍາເນີນຂັ້ນຕອນນັ້ນ.

# ຈະຕິດຕໍ່ຫາພວກເຮົາໄດ້ຢ່າງໃດ

**www.igt.gov.au**

**1300 44 88 29** (ໂທ ຣາຄາທ້ອງຖິ່ນ)

**GPO Box 551**
**Sydney NSW 2001**

ຖ້າທ່ານຕ້ອງການຮ້ອງຮຽນເປັນພາສາອື່ນທີ່ບໍ່ແມ່ນພາສາອັງກິດ ຂໍໃຫ້ໂທຫາພະແນກແປເອກະສານແລະແປພາສາ (Translating and Interpreting Service [TIS]) ທີ່ເລກໂທ **131 450**.

ຖ້າທ່ານມີບັນຫາເຣື່ອງການໄດ້ຍິນສຽງຫຼືການປາກເວົ້າແລະທ່ານເຂົ້າໃຊ້ລະບົບຕິພິມແບບໂທຣະພິມ (TTY) ຫຼື ສາມາດໃຊ້ເຄື່ອງແບບທັນສມັຍໄດ້, ຂໍໃຫ້ໂທຫາເລກ **13 36 77**.

ຖ້າທ່ານບໍ່ສາມາດເຂົ້າໃຊ້ລະບົບ TTY ຫຼື ໃຊ້ເຄື່ອງແບບທັນສມັຍໄດ້, ຂໍໃຫ້ໂທຫາບໍຣິການສື່ສານສົ່ງຕໍ່ (Speech to Speech Relay Service) ທີ່ເລກໂທ **1300 555 727**.